ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--==໑໑00 .·. 00໑໑==--

ກະຊວງ ກະສິກຳ ແລະ ປ່າໄມ້

ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເລກທີ: 001 /ກພປຊ.

ນະຄອນຫລວງວຽງຈັນ, ວັນທີ: 27 FEB 2008

# ລະບຽບການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 38/ນຍ, ລົງວັນທີ 21/02/2005 ວ່າດ້ວຍ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້.
- ອີງຕາມກົດລະບຽບຂອງ ກອງທຶນ ສະບັບເລກທີ 0264/ກປ.ກພປຊ, ລົງວັນທີ 27/9/2005.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍພາລະບົດບາດ ຂອງກອງເລຂາ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ສະບັບເລກທີ 002/ກປ.ກພປຊ.06, ລົງວັນທີ 19/4/2006.
- ອີງຕາມ ບົດແນະນຳ ຂອງກະຊວງການເງິນ ສະບັບເລກທີ 0885/ກງ, ລົງວັນທີ 27/04/2007 ແລະ ແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0145/ກປ, ລົງວັນທີ 10/07/2007 ກ່ຽວກັບການເກັບລາຍຮັບ ແລະ ການຄຸ້ມຄອງ ລາຍຈ່າຍ ຂອງກອງທຶນພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

## ສະພາບໍລິຫານ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ອອກລະບຽບ ດັ່ງລຸ່ມນີ້ :

## ໝວດທີ I

## ຈຸດປະສົງ ແລະ ເປົ້າໝາຍ

ມາດຕາ 1. ຈຸດປະສົງ ແມ່ນເພື່ອຄຸ້ມຄອງ/ນຳໃຊ້ງົບປະມານ ຂອງກອງທຶນ ໃຫ້ສອດຄ່ອງ ກັບກົດລະບຽບຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ສະບັບເລກທີ: 0264/ກປ.ກພປຊ, ລົງວັນທີ 27/9/2005 ແລະ ບົດແນະນຳກ່ຽວ ກັບການຄຸ້ມຄອງ

ລາຍຮັບຂອງກອງທຶນ ສະບັບເລກທີ 0885/ກງ, ລົງວັນທີ 27/04/2007 ແລະ ແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0145/ກປ, ລົງວັນທີ 10/07/2007.

ມາດຕາ 2. ເປົ້າໝາຍ ແມ່ນເພື່ອຮັບປະກັນ ໃຫ້ມີແຫລ່ງທຶນ ທີ່ເໝາະສົມ, ພຽງພໍ, ສະໝ່ຳ ສະເໝີ ແລະ ໝັ້ນຄົງ ເພື່ອນຳໃຊ້ເຂົ້າໃນກິດຈະກຳຕ່າງໆຂອງວຽກງານພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ການບໍລິຫານ ງົບປະມານ ໃຫ້ຖືກຕາມເປົ້າໝາຍ ຂອງໂຄງການຈຸດສຸມຂອງກອງທຶນ ໃຫ້ເກີດຜົນປະໂຫຍດສູງສຸດທາງດ້ານ ປະລິມານ ແລະ ຄຸນນະພາບ.

## ໝວດທີ II

## ແຫລ່ງລາຍຮັບ ຂອງກອງທຶນ

ມາດຕາ 3. ແຫລ່ງລາຍຮັບຂອງກອງທຶນ ແມ່ນໄດ້ກຳນົດໄວ້ ໃນມາດຕາ 12 ຂອງດຳລັດ ສະບັບເລກທີ 38/ນຍ, ລົງວັນທີ 21/02/2005 ດັ່ງລຸ່ມນີ້:

- ຄ່າບູລະນະ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ຄ່າພັນທະ ປູກໄມ້ ແລະ ເຄື່ອງປ່າຂອງດົງທົດແທນ;
- ຄ່າສຳຫລວດປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ການປະກອບສ່ວນ ໃນການດຳເນີນທຸລະກິດໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ຂອງ ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດ;
- ການປະກອບສ່ວນຂອງລັດ, ບຸກຄົນ, ນິຕິບຸກຄົນ, ລວມໝູ່, ອົງການຈັດຕັ້ງສັງຄົມ ພາຍໃນແລະ ຕ່າງປະເທດ, ອົງການຈັດຕັ້ງ ສາກົນ ລວມທັງ ສະຖາບັນການເງິນ ສາກົນ ແລະ ອື່ນໆ;
- ລາຍຮັບອື່ນໆ ລວມທັງດອກເບ້ຍ ຫລື ເງິນປັນຜົນຈາກການລົງທຶນ ຫລື ຖືຫຸ້ນ;
- ລາຍຮັບຈາກສ່ວນແບ່ງ ປັນຜົນກຳໄລຈາກການຂາຍໄມ້ໃນປ່າຜະລິດ ຕາມດຳລັດຂອງນາຍົກ ລັດຖະມົນຕີ ສະບັບເລກທີ 59/ນຍ, ລົງວັນທີ 22/5/2002 ວ່າດ້ວຍ, ການຄຸ້ມຄອງປ່າຜະລິດ ແບບຍືນນານ.
- ຄ່າບູລະນະປ່າໄມ້ ຈາກການກໍ່ສ້າງເຂື່ອນໄຟຟ້າ, 1% ຂອງລາຍຮັບຈາກການຂາຍໄຟຟ້າ.
- ຄ່າບູລະນະປ່າໄມ້ ຈາກການຂຸດຄົ້ນບໍ່ແຮ່, 1% ຂອງລາຍຮັບຈາກການຂາຍແຮ່ທາດ.
- ຄ່າປັບໃໝໄມ້ຜິດກົດໝາຍ ແລະ ຄ່າປັບໃໝອື່ນໆ ທີ່ທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ (ຫັກເອົາ 1% ຂອງຄ່າປັບໃໝ).

ມາດຕາ 4. ຫ້ອງການກອງເລຂາກອງທຶນ ໂດຍສົມທົບກັບກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ກ່ຽວກັບການເກັບລາຍຮັບ ບົນພື້ນຖານ ອັດຕາການ ຄິດໄລ່ການ ເກັບລາຍຮັບຕາມ ບົດແນະນຳ ສະບັບເລກທີ 0885/ກງ, ລົງວັນທີ 27/04/2007 ຂອງກະຊວງການເງິນວາງອອກ ໃນແຕ່ລະປະເພດລາຍຮັບ.

## ໝວດທີ III
## ການຂຶ້ນແຜນນຳໃຊ້ທຶນ

ມາດຕາ 5. ບັນດາແຂວງ ແລະ ນະຄອນຫລວງ ໃນຂອບເຂດທົ່ວປະເທດ ຫລື ພາກສ່ວນ ກ່ຽວຂ້ອງທີ່ຂຶ້ນແຜນສະເຫນີນຳໃຊ້ງົບເງິນກອງທຶນ ຕ້ອງໃຫ້ຖືກຕາມເປົ້າຫມາຍ ການນຳໃຊ້ເງິນຂອງກອງທຶນ ທີ່ໄດ້ກຳນົດໄວ້ໃນ ມາດຕາ 14, ຂອງດຳລັດ ສະບັບ ເລກທີ 38/ນຍ, ລົງວັນທີ 21/02/2005. ຕ້ອງໄດ້ສຶກສາ ຂໍ້ມູນ, ທ່າແຮງ ແລະ ເງື່ອນໄຂຄວາມ ເປັນໄປໄດ້ ໃຫ້ລະອຽດເທົ່າທີ່ຄວນ ເພື່ອຈັດຕັ້ງປະຕິບັດເປັນ ໂຄງການຈຸດສຸມ, ມີກິດຈະກຳ/ຫນ້າວຽກລະອຽດ ແລະ ຄິດໄລ່ງົບປະມານ ການໃຊ້ຈ່າຍ ຢ່າງສົມເຫດສົມຜົນ; ບໍ່ຄວນຂຶ້ນແຜນ ແລະ ຄິດໄລ່ແບບລວມໆ ທີ່ເຫັນວ່າບໍ່ໄປ ຕາມເປົ້າໝາຍ ແລະ ບໍ່ຖືກຕາມລະບຽບການ ນຳໃຊ້ງົບປະມານຂອງກອງທຶນ.

ມາດຕາ 6. ຫ້ອງການກອງເລຂາກອງທຶນ ເປັນຜູ້ຄົ້ນຄ້ວາສັງລວມ, ພິຈາລະນາ, ຈັດສັນງົບ ປະມານຂອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ສະເຫນີແຜນນຳໃຊ້ເງິນຂອງ ກອງທຶນ, ແລ້ວນຳສະເຫນີຜ່ານກອງເລຂາກອງທຶນ ກ່ອນການນຳສະເຫນີ ຂໍອະນຸມັດງົບປະມານດັ່ງກ່າວຈາກສະພາບໍລິຫານກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມລະບຽບຫລັກການ ທີ່ກຳນົດໄວ້.

ພາຍຫລັງ, ປະທານສະພາບໍລິຫານກອງທຶນ ໄດ້ຮັບຮອງເອົາແຜນການນຳ ໃຊ້ງົບປະມານຂອງກອງທຶນແລ້ວ, ນຳສະເຫນີຫາກະຊວງການເງິນ ເພື່ອໃຫ້ລວມສູນຢູ່ແຜນງົບປະມານລາຍຮັບ-ລາຍຈ່າຍແຫ່ງຊາດ ທີ່ສະພາແຫ່ງຊາດ ໄດ້ຮັບຮອງ ເອົາແຜນການດັ່ງກ່າວໃນແຕ່ລະສົກປີ. ຈາກນັ້ນ, ຈຶ່ງຈັດຕັ້ງປະຕິບັດຈັດສັນ ແລະ ແບ່ງປັນງົບປະມານເພື່ອຜັນຂະຫຍາຍໄປຕາມແຜນການນຳໃຊ້ງົບປະມານຂອງກອງທຶນ ໂດຍແມ່ນປະທານສະພາບໍລິຫານກອງທຶນເປັນຜູ້ອະນຸມັດຂໍ້ຕົກລົງການ ນຳໃຊ້ງົບປະມານດັ່ງກ່າວ.

## ໝວດທີ IV
## ການຄຸ້ມຄອງ ແລະ ນຳໃຊ້ ທຶນ

**ມາດຕາ 7.** ຫ້ອງການກອງເລຂາກອງທຶນ ເປັນຜູ້ຄຸ້ມຄອງງົບປະມານທັງໝົດ ຂອງກອງທຶນ ທີ່ໄດ້ຈັດສັນ ຫລື ແບ່ງປັນງົບປະມານດັ່ງກ່າວໃຫ້ແຂວງ, ນະຄອນຫຼວງ ແລະ ພາກ ສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມເປົ້າໝາຍຈຸດສຸມວຽກງານພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃນແຕ່ລະໄລຍະ ຕາມການຊີ້ນຳຂອງກອງເລຂາກອງທຶນ. ງົບປະມານຂອງກອງທຶນ ແມ່ນຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ໄດ້ລະບຸໄວ້ໃນມາດ ຕາທີ 14 ຂອງດຳລັດເລກທີ 38/ນຍ, ລົງວັນທີ 21/02/2005.

ເງິນລາຍຮັບດັ່ງກ່າວ ໂດຍແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫລວງ ເປັນຜູ້ຕິດຕາມ ຄິດໄລ່ເກັບກຳ ລາຍຮັບຂອງກອງທຶນ ກພປຊ ໃຫ້ຜູ້ປະກອບການໄປຖອກເຂົ້າບັນຊີລໍຖ້າຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ທີ່ເປີດໄວ້ຢູ່ຄັງເງິນແຂວງ, ຈາກນັ້ນຜູ້ປະກອບການນຳເອົາໃບມອບເງິນໄປແຈ້ງ ໃຫ້ຫ້ອງການຊັບສິນ ແລະ ຂະແໜງປ່າໄມ້ແຂວງ ຮັບຮູ້ ເພື່ອຄວາມສະດວກໃນການ ເຄື່ອນຍ້າຍສິນຄ້າ. ພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບຫ້ອງການຄັງເງິນແຂວງ ໂອນເງິນພັນທະດັ່ງກ່າວເຂົ້າບັນຊີຂອງກອງທຶນ ທີ່ເປີດໄວ້ຄັງເງິນຢູ່ຄັງເງິນສູນກາງ ຕາມແນະນຳສະບັບເລກທີ່ 0885/ກງ, ລົງວັນທີ 27/04/2007 ແລະ ແຈ້ງການ ສະບັບເລກທີ 0145/ກປ, ລົງວັນທີ 10/07/2007.

**ມາດຕາ 8.** ພາຍຫລັງ ທີ່ສະພາບໍລິຫານ ໄດ້ຮັບຮອງເອົາແຜນການ ແລະ ງົບປະມານ ຂອງກອງທຶນແລ້ວ, ຂັ້ນຕອນໃນການຄຸ້ມຄອງຈັດຕັ້ງປະຕິບັດ ມອບເປັນຄວາມຮັບຜິດຊອບຂອງກອງເລຂາ ແລະ ຫ້ອງການກອງເລຂາກອງທຶນ.

**ມາດຕາ 9.** ບັນດາແຂວງ ແລະ ນະຄອນຫລວງ ຫລື ພາກສ່ວນກ່ຽວຂ້ອງ ຈະໄດ້ຮັບງົບປະມານພາຍຫລັງຫ້ອງການກອງທຶນ ໄດ້ຄົ້ນຄ້ວາ ແລະ ນຳສະເໜີຂໍອະນຸມັດຈາກກອງເລຂາກອງທຶນ ເພື່ອແບ່ງປັນຕາມໜ້າວຽກ ຫລື ກິດຈະກຳຂອງໂຄງການໃນ ແຕ່ລະໄລຍະ ຫລື ແຕ່ລະງວດ ຂອງສົກປີ.

**ມາດຕາ 10.** ຫ້ອງການກອງເລຂາກອງທຶນ ຈະເບີກຈ່າຍ ຫລື ໂອນເງິນ ໃຫ້ໂຄງການຈຸດສຸມຂອງຂະແໜງການປ່າໄມ້ ພາຍໃຕ້ການເຫັນດີ ຈາກກອງເລຂາກອງທຶນ ແລະ ອະນຸມັດຂໍ້ຕົກລົງນຳໃຊ້ງົບປະມານ ຈາກປະທານສະພາບໍລິຫານກອງທຶນ ບົນພື້ນຖານຫລັກການດັ່ງນີ້:

10.1 ຖ້າແມ່ນໂຄງການເຄື່ອນໄຫວດ້ານວິຊາການ ຈະຕ້ອງມີແຜນລະອຽດເຊັ່ນ: ແຜນວຽກ, ແຜນຄົນ, ແຜນເງິນ, ແຜນເວລາຢ່າງຈະແຈ້ງ ເພື່ອເປັນບ່ອນອີງໃນການຈ່າຍເງິນໃຫ້ເປັນແຕ່ລະງວດ ແຕ່ລະໄລຍະເວລາ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມ ຊຸກຍູ້ວຽກງານດັ່ງກ່າວ.

10.2. ໃນກໍລະນີຈັດຊື້ສິນຄ້າ, ຈັດຈ້າງ ຫລື ຮັບເຫມົາກໍ່ສ້າງພື້ນຖານໂຄງລ່າງ ຈະຕ້ອງຈັດຕັ້ງປະຕິບັດ ແລະ ປະກອບເອກະສານໃຫ້ຖືກຕ້ອງ ກັບດຳລັດວ່າດ້ວຍການຈັດຊື້ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ທີ່ກະຊວງການເງິນວາງອອກ ສະບັບເລກທີ 0063/ກງ, ລົງວັນທີ 12 ມີນາ 2004.

ມາດຕາ 11. ການເບີກຈ່າຍ ຫລື ໂອນເງິນ ໃຫ້ບັນດາແຂວງ, ນະຄອນຫລວງ ແລະ ພາກສ່ວນກ່ຽວຂ້ອງ ໃນແຕ່ລະຄັ້ງ, ຫ້ອງການກອງເລຂາກອງທຶນ ຈະເບີກຈ່າຍໃຫ້ເປັນແຕ່ລະ ງວດ ຫລື ຕາມໜ້າວຽກຂອງໂຄງການ ແລະ ກ່ອນຈະສົ່ງເງິນຄັ້ງຕໍ່ໄປ, ພາຍຫລັງທີ່ພາກສ່ວນກ່ຽວຂ້ອງໄດ້ສະຫລຸບ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານ ແລະ ການໃຊ້ຈ່າຍ ໃຫ້ຫ້ອງການກອງເລຂາກອງທຶນ ຕາມລະບຽບການວາງອອກ.

## ໝວດທີ V
## ການກູ້ຢືມເງິນ ຂອງກອງທຶນ

ມາດຕາ 12. ຫ້ອງການກອງເລຂາກອງທຶນ ຈະໃຫ້ການບໍລິການ ເງິນກູ້ ແກ່ປະຊາຊົນ, ບຸກຄົນ, ນິຕິບຸກຄົນ (ບໍລິສັດ), ກຸ່ມກອງລວມໝູ່, ໂຄງການ ແລະ ອົງການຈັດຕັ້ງລັດ ຂັ້ນຕ່າງໆ ທີ່ມີຄວາມສົນໃຈ ໃນການປູກໄມ້, ການພັດທະນາແຫລ່ງທ່ອງທ່ຽວແບບ ອະນຸລັກທຳມະຊາດ ແລະ ອື່ນໆທີ່ກ່ຽວຂ້ອງ ກັບວຽກງານການພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ໃນອັດຕາດອກເບ້ຍ 7% ຕໍ່ ປີ.

ມາດຕາ ທີ 13. ປະຊາຊົນ, ບຸກຄົນ, ນິຕິບຸກຄົນ ທີ່ຕ້ອງການກູ້ຢືມເງິນຂອງກອງທຶນ, ຕ້ອງມີບົດວິພາກເສດຖະກິດໂຄງການທີ່ຈະລົງທຶນ ແລະ ມີຫລັກຊັບ ຄໍ້າປະກັນ ຕາມລະ ບຽບການປ່ອຍສິນເຊື່ອຂອງທະນາຄານ. ສ່ວນພະນັກງານ, ກຸ່ມກອງ ລວມໝູ່, ໂຄງການລັດ ແລະ ອົງການ ຈັດຕັ້ງລັດຂັ້ນຕ່າງໆ ຕ້ອງມີຫນັງສືຄໍ້າປະກັນ ຈາກຫ້ອງ ການທີ່ຕົນເອງສັງກັດຢູ່

## ໝວດທີ VI

## ການສະຫຼຸບລາຍງານ, ຕິດຕາມກວດກາ ແລະ ປະເມີນຜົນ ການໃຊ້ຈ່າຍງົບປະມານ ຂອງກອງທຶນ

ມາດຕາ 14. ບັນດາແຂວງ ແລະ ນະຄອນຫລວງ ຫລື ໂຄງການຈຸດສຸມຂອງກອງທຶນ, ພາຍຫລັງທີ່ໄດ້ຮັບງົບ ປະມານຈາກກອງທຶນ ແລະ ໃຊ້ຈ່າຍເຂົ້າໃນຫນ້າວຽກຕ່າງໆແລ້ວ, ຕ້ອງໄດ້ເປັນເຈົ້າການເອົາໃຈໃສ່ສະຫລຸບການໃຊ້ຈ່າຍຕ່າງໆ ໃຫ້ລະອຽດຕາມລະ ບຽບການ (ບິດສະຫລຸບເງິນລ່ວງຫນ້າ ແລະ ມີໃບບິນ ຂັດຕິດພ້ອມ) ພ້ອມທັງ, ລາຍງານຫນ້າວຽກ/ກິດຈະກຳ ທີ່ໄດ້ຈັດຕັ້ງປະຕິບັດ ໃຫ້ຫ້ອງການກອງທຶນຊາບ ພາຍຫລັງທີ່ສຳເລັດວຽກງານ ຫລື ພາຍໃນ 30 ວັນ ຫລື ລາຍງານປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ.

ມາດຕາ 15. ບິດສະຫລຸບການໃຊ້ຈ່າຍດ້ານການເງິນ ທີ່ທາງແຂວງ ແລະ ພາກສ່ວນກ່ຽວຂ້ອງ ທີ່ສົ່ງໃຫ້ຫ້ອງການກອງເລຂາກອງທຶນ ເພື່ອຂໍໂອນເງິນໃນງວດຕໍ່ໄປ, ຖ້າຫາກບິດສະ ຫລຸບການເງິນດັ່ງກ່າວ ຖືກຕ້ອງຕາມລະບຽບການຂອງກອງທຶນ ກໍຈະໄດ້ຮັບການພິຈາລະນາ ຕາມລະບຽບການ.

ມາດຕາ 16. ປະຕິບັດຕາມ ມາດຕາ 16 ຂອງດຳລັດສະບັບເລກທີ 38/ນຍ, ລົງວັນທີ 21/02/2005. ເພື່ອຕິດຕາມກວດກາ ປະເມີນຜົນ ການຈັດຕັ້ງປະຕິບັດຂອງ ບັນດາ ແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງທີ່ໄດ້ນຳໃຊ້ງົບປະມານຂອງ ກອງທຶນ ເຂົ້າໃນເປົ້າຫມາຍທີ່ໄດ້ສະເຫນີຂຶ້ນມາ, ຫ້ອງການກອງເລຂາກອງທຶນຕ້ອງໄດ້ລົງ ຕິດຕາມ ກວດກາ ເປັນປົກກະຕິ ແລະ ຕໍ່ເນື່ອງຕາມພາລະບົດບາດຂອງຕົນ.

## ໝວດທີ VII

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 17. ປະຊາຊົນ, ບຸກຄົນ, ນິຕິບຸກຄົນ, ບໍລິສັດ, ກົມກອງ ລວມຫມູ່, ໂຄງການ ແລະ ອົງການຈັດຕັ້ງລັດຂັ້ນຕ່າງໆ ທີ່ມີຜົນງານດີເດັ່ນ ຈາກການພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມຄວາມເຫມາະສົມ ຊຶ່ງສະພາບໍລິຫານກອງທຶນ ຈະເປັນຜູ້ນຳສະເຫນີຕໍ່ລັດຖະບານ ໃນການກຳນົດເງິນບຳເນັດ, ນະໂຍບາຍສິນເຊື່ອ, ພາສີອາກອນ ແລະ ອື່ນໆ ຕາມລະບຽບການ.

ມາດຕາ 18. ມາດຕະການຕໍ່ຜູ້ລະເມີດ ທີ່ນຳໃຊ້ເງິນຂອງກອງທຶນບໍ່ຖືກເປົ້າຫມາຍ ຫລື ນຳໃຊ້ເຂົ້າ ໃນກິດຈະກຳອື່ນໆ ທີ່ບໍ່ແມ່ນວຽກງານການພັດທະນາປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້, ໃນເບື້ອງຕົ້ນແມ່ນຈະຖືກສຶກສາອົບຮົມ, ປັບໃຫມ ແລະ ດຳເນີນຄະດີຕາມ ກົດຫມາຍທາງອາຍາ ບົນພື້ນຖານກົດຫມາຍປ່າໄມ້ ສະບັບເລກທີ 13/ສພຊ, ລົງວັນທີ 19/11/2005.

## ໝວດທີ VIII

## ບົດບັນຍັດ ສຸດທ້າຍ

**ມາດຕາ 19.** ຂະແໜງປ່າໄມ້ແຂວງແລະ ນະຄອນຫລວງ, ສູນບໍລິການເຕັກກະສິກຳ ແລະ ປ່າໄມ້ ກຸ່ມບ້ານພັດທະນາ ແລະ ພາກສ່ວນກ່ຽວຂ້ອງ ທີ່ນຳໃຊ້ງົບປະມານຂອງກອງ ທຶນ ຈົ່ງຮັບຮູ້ ແລະ ມີໜ້າທີ່ຈັດຕັ້ງປະຕິບັດ ລະບຽບການສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 20.** ສະພາບໍລິຫານກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເປັນຜູ້ປັບປຸງ, ແກ້ໄຂ ລະບຽບສະບັບນີ້ ໃຫ້ສອດຄ່ອງຕາມເປົ້າໝາຍ ການຄຸ້ມຄອງ ແລະ ນຳໃຊ້ງົບປະມານຂອງກອງທຶນ ຕາມພາລະບົດບາດ ແລະ ໜ້າທີ່ຂອງຫ້ອງການກອງເລຂາ ກອງທຶນ ຖ້າເຫັນວ່າມີຄວາມຈຳເປັນ ໂດຍໄດ້ຮັບການຊີ້ນຳ ແລະ ເຫັນດີ ຈາກລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 21.** ລະບຽບການຄຸ້ມຄອງ ແລະ ນຳໃຊ້ງົບປະມານຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ສະບັບນີ້ ປ່ຽນແທນສະບັບເລກທີ 005/ກພປຊ.06, ລົງວັນທີ 25/7/2006 ແລະ ມີຜົນບັງຄັບໃຊ້ໄດ້ນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາບໍລິຫານ**

ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ສະພາບໍລິຫານ

ດຣ. ຕີ ພົມມະສັກ